**ມິຊຊາສົມໂພດພຣະຕຣີເອກະນຸພາບ**
**ວັນອາທິດ ທີ 30 ພຶດສະພາ 2021**



**ພຣະວໍລະສານໂດຍນັກບຸນມັດເທວ 28, 16-20**

ໃນເວລານັ້ນ, ພວກອັກຄະສາວົກທັງສິບເອັດອົງພາກັນຂຶ້ນເທິງພູໜ່ວຍໜຶ່ງຢູ່ແຂວງກາລີເລຕາມພຣະອົງໄດ້ສັ່ງບອກ. ເມື່ອພົບເຫັນພຣະອົງແລ້ວພວກເຂົາກໍພາກັນຂາບໄຫວ້ນະມັດສະການພຣະອົງ, ແຕ່ລາງຄົນຍັງມີຄວາມສົງໄສຢູ່.

ພຣະເຢຊູເຈົ້າຊົງຫຍັບເຂົ້າໄປຫາພວກເຂົາແລະກ່າວວ່າ: "ເຮົາໄດ້ຮັບສິດອຳນາດທຸກປະການໃນສະຫວັນ ແລະໃນແຜ່ນດິນ. ດັ່ງນັ້ນ, ພວກເຈົ້າຈົ່ງພາກັນໄປທົ່ວໂລກເພື່ອທຳໃຫ້ທຸກຊາດທຸກພາສາໄດ້ກັບເປັນລູກສິດຂອງເຮົາ. ຈົ່ງລ້າງບາບໃຫ້ພວກເຂົາເດຊະພຣະນາມພຣະບິດາແລະພຣະບຸດ ແລະພຣະຈິດ, ແລະສອນໃຫ້ເຂົາຖືຕາມພຣະບັນຍັດທັງມວນຂອງເຮົາ. ສ່ວນເຮົາ, ເຮົາກໍຢູ່ນຳພວກເຈົ້າທຸກໆວັນຈົນເຖິງວັນສິ້ນພິພົບ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນອາທິດກ່ອນພວກເຮົາໄດ້ສະຫລອງງານສົມໂພດພຣະຈິດເຈົ້າສະດັດລົງມາ. ສ່ວນວັນອາທິດນີ້, ພວກເຮົາກໍສະຫລອງງານສົມໂພດພຣະຕຣີເອກະນຸພາບ (ພຣະເຈົ້າໜຶ່ງດຽວແຕ່ເປັນສາມພຣະອົງ). ແນ່ນອນ, ທໍາລໍ້າເລີກພຣະຕຣີເອກະນຸພາບເປັນສິ່ງທີ່ສະຕິປັນຍາມະນຸດບໍ່ສາມາດຢັ່ງເຖິງໄດ້. ເຖິງປານນັ້ນກໍດີ, ພຣະກຣິສຕະຈັກກໍພະຍາຍາມຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງທໍາລໍ້າເລີກນີ້ຜ່ານທາງບົດອ່ານທັງສາມບົດໃນວັນອາທິດນີ້. ຖ້າໃຫ້ພວກເຮົາສະຫລຸບບົດອ່ານທັງສາມບົດໃນວັນສົມໂພດພຣະຕຣີເອກະນຸພາບນີ້, ພວກເຮົາກໍຈະກ່າວວ່າ ບົດອ່ານທັງສາມບົດລ້ວນແຕ່ກ່າວເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດແລະເປັນຕົ້ນຕໍ່ປະຊາກອນຜູ້ເລືອກສັນຂອງພຣະອົງ.

ຍ້ອນພຣະເຈົ້າຮັກມະນຸດ, ພຣະອົງຈຶ່ງສົ່ງພຣະບຸດຂອງພຣະອົງລົງມາເພື່ອຊ່ວຍມະນຸດໃຫ້ຫລີດຕາຍແລະໄຂສໍາແດງໃຫ້ພວກເຂົາຮູ້ຈັກເຖິງຄວາມຮັກຂອງພຣະບິດາທີ່ມີຕໍ່ພວກເຂົາ. ດ້ວຍເຫດນີ້, ພຣະເຈົ້າທີ່ພວກເຮົາເຊື່ອບໍ່ແມ່ນພຣະເຈົ້າທີ່ຂົ່ມເຫັງແລະໃຊ້ອໍານາດເພື່ອທັບເຕັງພວກເຮົາ, ແຕ່ແມ່ນພຣະເຈົ້າທີ່ຮັກພວກເຮົາແລະຢູ່ໃກ້ຊິດພວກເຮົາ. ດັ່ງໃນບົດອ່ານທີໜຶ່ງຈາກໜັງສືປະມວນກົດໝາຍທີ່ກ່າວວ່າ ມີພຣະເຈົ້າໃດທີ່ຢູ່ໃກ້ຊິດກັບປະຊາກອນຂອງພຣະອົງ ດັ່ງພຣະເຈົ້າຂອງພວກເຮົາບໍ?

ພຣະເຈົ້າຜູ້ພວກເຮົາເຊື່ອນີ້ປາດຖະໜາຢາກໃຫ້ພວກເຮົາເປັນບຸດບຸນທໍາຂອງພຣະອົງຜ່ານທາງພຣະເຢຊູກຣິສໂຕພຣະບຸດສຸດທີ່ຮັກຂອງພຣະອົງ. ເພື່ອຈະໄດ້ກາຍເປັນບຸດຂອງພຣະເຈົ້ານີ້ພວກເຮົາຕ້ອງໄດ້ເຊື່ອໃນວາຈາຂອງພຣະບຸດພຣະອົງ. ແລະເກີດໃໝ່ດ້ວຍນໍ້າແລະພຣະຈິດເຈົ້າໂດຍອາໄສນາມຂອງພຣະບິດາ, ພຣະບຸດແລະພຣະຈິດ. ດັ່ງທີ່ພວກເຮົາໄດ້ຟັງໃນພຣະວໍລະສານຂອງວັນນີ້.

ແລະແມ່ນພຣະຈິດເຈົ້າຈະຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄໍາສອນແລະທຸກສິ່ງທີ່ພຣະເຢຊູເຈົ້າໄດ້ກ່າວກັບພວກເຮົາ. ແລະພຣະຈິດເຈົ້ານີ້ຍັງຊ່ວຍພວກເຮົາໃຫ້ເອີ້ນຫາພຣະເຈົ້າຢູ່ສະຫວັນວ່າ: ພໍ່ເອີຍ!

ສິ່ງທີ່ກ່າວມາຂ້າງເທິງນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈຢ່າງໜຶ່ງວ່າ ພຣະຕຣີເອກະນຸພາບຊຶ່ງພວກເຮົາສະຫລອງວັນນີ້ແມ່ນພຣະເຈົ້າທີ່ຮັກພວກເຮົາແລະຢູ່ໃກ້ຊິດກັບພວກເຮົາ. ພຣະອົງປາດຖະໜາໃຫ້ພວກເຮົາເປັນບຸດບຸນທໍາຂອງພຣະອົງເພື່ອຈະໄດ້ມີສ່ວນຮ່ວມໃນຊີວິດນິລັນດອນ. ແລະພຣະເຈົ້ານີ້ພວກເຮົາເອີ້ນວ່າ: ພຣະບິດາ, ພຣະບຸດແລະພຣະຈິດ.

**ພາວະນາ**

ໂອພຣະເຈົ້າ ໂຜດຊ່ວຍລູກໃຫ້ສໍາພັດໄດ້ເຖິງຄວາມຮັກທີ່ພຣະອົງຊົງມີຕໍ່ລູກ. ທຸກຄັ້ງທີ່ລູກທໍາສໍາຄັນກາງເຂນແລະເອີ້ນຫານາມຊື່ຂອງພຣະອົງ: ພຣະບິດາ, ພຣະບຸດ ແລະພຣະຈິດ; ແມ່ນລູກເອີ້ນຫາພຣະບິດາຜູ້ຊົງຮັກລູກ, ພຣະບຸດຜູ້ຊົງມອບຊີວິດເພື່ອລູກແລະພຣະຈິດຜູ້ຊົງທໍາໃຫ້ລູກເປັນຜູ້ສັກສິດເໝືອນກັບພຣະເຈົ້າເປັນຜູ້ສັກສິດນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ